# <u>ໂທລະເລກອວຍພອນ</u>

**ເຖິງ:** ສະຫາຍ ຫຼີວ ຈ້ຽນຊາວ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ.

<u>ທີ່ ນະຄອນຫລວງປັກກິ່ງ.</u>

ສະຫາຍທີ່ຮັກແພງ,

ເນື່ອງໃນໂອກາດທີ່ ພັກກອມມູນິດຈີນ ໄຂກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ໃນວັນທີ 16 ຕຸລາ 2022, ໃນນາມ ຄະນະພົວພັນຕ່າງປະເທດສູນກາງ ພັກປະຊາຊົນ ປະຕິວັດລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງພອນໄຊອັນປະເສີດຖານສະຫາຍອ້າຍນ້ອງ ມາຍັງ ສະຫາຍ ແລະ ຜ່ານສະຫາຍ ໄປຍັງ ສະມາຊິກພັກ, ພະນັກງານ-ລັດຖະກອນ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ທຸກຖ້ວນໜ້າ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ແມ່ນເຫດການການເມືອງທີ່ມີຄວາມໝາຍສຳຄັນຍິ່ງ ຂອງ ພັກກອມມູນິດຈີນ ແລະ ປະຊາຊົນຈີນອ້າຍນ້ອງ, ເຊິ່ງໄຂຂຶ້ນໃນໄລຍະສຳຄັນຂອງການກຳນົດຍຸດທະສາດ ແລະ ວາງແນວທາງນະໂຍບາຍ ເພື່ອບັນລຸເປົ້າໝາຍ ສ້າງສັງຄົມນິຍົມຕາມສີສັນພິເສດທີ່ທັນສະໄໝຮອບດ້ານ ຂອງ ສປ ຈີນ ໃນກາງສັດຕະວັດທີ 21 ໃຫ້ປະກົດຜົນເປັນຈິງ.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ບົນພື້ນຖານບົດຮຽນຈາກຜົນສຳເລັດອັນໃຫຍ່ຫຼວງ, ຮອບດ້ານ ເປັນປະຫວັດການ ຂອງ ພັກກອມມູນິດຈີນ ໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XIX ຂອງພັກ ແລະ ຄວາມສາມັກຄີເປັນຈິດໜຶ່ງໃຈດຽວຂອງປະຊາຊົນຈີນ ອ້ອມຂ້າງສູນກາງພັກ ອັນມີສະຫາຍເລຂາທິການໃຫຍ່ ສີຈິ້ນຜິງ ເປັນແກນກາງ, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ຈະບັນລຸຜົນສຳເລັດຢ່າງສະຫງ່າງາມ ແລະ ມະຕິ ຂອງກອງປະຊຸມໃຫຍ່ຄັ້ງນີ້ ຈະສືບຕໍ່ເປັນແສງສະຫວ່າງນຳພາປະຊາຊົນຈີນອ້າຍນ້ອງ ຍາດໄດ້ຜົນສຳເລັດອັນໃໝ່ ແລະ ໃຫຍ່ຫຼວງກວ່າເກົ່າ ໃນການສ້າງສາພັດທະນາປະເທດຊາດ ຕາມທິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ກໍຄື ຄວາມມຸ້ງຫວັງໃນການຟື້ນຟູຄວາມຮຸ່ງເຮືອງສີວິໄລຂອງປະຊາຊາດຈີນ.

ເນື່ອງໃນໂອກາດສຳຄັນນີ້, ຂໍອວຍພອນໃຫ້ ສະຫາຍ, ພ້ອມດ້ວຍຄະນະນຳ, ສະມາຊິກພັກ ແລະ ພະນັກງານ-ລັດຖະກອນ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນໜ້າທີ່ອັນມີກຽດຂອງຕົນ, ປະກອບສ່ວນຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XX ຂອງພັກກອມມູນິດຈີນ ວາງອອກຢ່າງມີໄຊ.

ຂໍອວຍພອນໃຫ້ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງ ພັກກອມມູນິດຈີນ ທີ່ມີກຽດສະຫງ່າ ຈົ່ງປະສົບຜົນສຳເລັດຢ່າງຈົບງາມ.

ອວຍພອນໃຫ້ ສາຍພົວພັນມິດຕະພາບ ອັນເປັນມູນເຊື້ອ, ການຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊະຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ຈົ່ງໝັ້ນຄົງຂະໜົງແກ່ນ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ດ້ວຍຄວາມນັບຖືຖານສະຫາຍ,

ນະຄອນຫຼວງວຽງຈັນ, ວັນທີ 16 ຕຸລາ 2022

ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ